STAY SAFE MN

# ສີ່ເຫດຜົນທີ່ສຳຄັນໃນການເຂົ້າຮັບການສັກຢາວັກຊີນໂຄວິດ-19



## 1. ມັນໄດ້ຜົນດີຫຼາຍ!

ບໍ່ມີໃຜຢາກເຈັບປ່ວຍ, ແລະ ໂຄວິດ-19 ສາມາດເຮັດໃຫ້ທຸກຄົນ ລວມເຖິງຄົນທີ່ຍັງໜຸ່ມ, ຄົນທີ່ມີສຸຂະພາບແຂງແຮງ ມີອາການປ່ວຍຢ່າງຮຸນແຮງໄດ້. ວັກຊີນແມ່ນປອດໄພ ແລະ ໄດ້ຜົນດີຫຼາຍໃນການປ້ອງກັນຈາກການເຈັບ ປ່ວຍໃຫ້ກັບຄົນໜຸ່ມນ້ອຍ ທີ່ມີອາຍຸ 5 ປີຂຶ້ນໄປ.



## 2. ບໍ່ມີການກັກຕົວອີກຕໍ່ໄປ!

ທ່ານບໍ່ຕ້ອງຂາດ ໂຮງຮຽນ, ຫລິ້ນກິລາ, ຫຼື ກິດຈະກຳອື່ນໆອີກແລ້ວ ຖ້າ ທ່ານໄດ້ໃກ້ຊິດກັບຄົນທີ່ເປັນໂຄວິດ-19 (ຈົນກວ່າທ່ານຈະບໍ່ມີອາການ ແລະ ໄດ້ຮັບວັກຊີນຄົບຖ້ວນທັງສອງໂດສ໌).

## 3. ກວດຫາເຊື້ອໂຄວິດ-19 ໜ້ອຍລົງ!

ຂ້າມການກວດຫາເຊື້ອທາງຜົ້ງດັງ ຫຼື ຖົ່ມນ້ຳລາຍໃສ່ຫຼອດ! ທ່ານບໍ່ຈຳເປັນ ຕ້ອງເຂົ້າຮັບການກວດເລື້ອຍໆ ຖ້າວ່າທ່ານໄດ້ຮັບວັກຊີນແລ້ວ.



## 4. ຜົນຂ້າງຄຽງຂອງການສັກວັກຊີນບໍ່ໄດ້ຮ້າຍແຮງ!

ຮູ້ສຶກບໍ່ສະບາຍຕົວໜ້ອຍໜຶ່ງເປັນເວລາໜຶ່ງ ຫຼື ສອງມື້ຫຼັງຈາກທີ່ໄດ້ຮັບການສັກຢາວັກຊີນນັ້ນຖືວ່າປົກກະຕິ, ແລະ ມັນຈະເຊົາເອງ. ນັ້ນໝາຍຄວາມວ່າຮ່າງກາຍຂອງທ່ານກຳລັງກຽມພ້ອມທີ່ຈະສູ້ກັບພະຍາດໂຄວິດໃນອານາຄົດ.

ກັບໄປສູ່ສິ່ງທີ່ພວກເຮົາມັກກັນເທາະ! ໂຮງຮຽນ, ກິລາ, ໄປເຮຮາກັບໝູ່ເພື່ອນ, ແລະ ໃຊ້ເວລາກັບຄອບຄົວ. ຖ້າທ່ານມີອາຍຸ 5 ປີ ຂຶ້ນໄປ, ເຂົ້າຮັບການ ສັກຢາວັກຊີນ!



MINNESOTA

Minnesota Department of Health | health.mn.gov | 651-201-5000 | 625 Robert Street North PO Box 64975, St. Paul, MN 55164-0975
ຕິດຕໍ່ຫາ health.communications@state.mn.us ເພື່ອຂໍຂໍ້ມູນໃນຮູບແບບອື່ນ. (Lao)
11/3/2021